ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

<u>ສຳນັກງານນາຍົກລັດຖະມົນຕີ</u>

ເລກທີ 340/ນຍ.
ນະຄອນຫຼວງວຽງຈັນ, ວັນທີ 04 ພະຈິກ 2005

# ດຳລັດ
## ຂອງນາຍົກລັດຖະມົນຕີ
## ວ່າດ້ວຍການປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2005-2006

---

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003.
- ອີງຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງປະກາດໃຊ້ໂດຍລັດຖະບັນຍັດ ຂອງປະທານປະເທດແຫ່ງ ສປປ ລາວ ສະບັບເລກທີ 40 /ສປປ, ລົງວັນທີ 13 /08/ 1994;
- ອີງຕາມມະຕິຂອງກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ V, ສະບັບເລກທີ 43/ ສພຊ-V, ລົງວັນທີ 11 ຕຸລາ 2005 ວ່າດວ້ຍ ການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2005-2006.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ອອກດຳລັດ :**

**ມາດຕາ 1:** ປະກາດໃຊ້ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2005-2006, ເລີ້ມແຕ່ວັນທີ 01 ຕຸລາ ປີ 2005 ເຖິງວັນທີ 30 ກັນຍາ ປີ 2006 ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2:** ແຜນພັດທະນາເສດຖະກິດ - ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2005-2006 ແມ່ນແຜນຈັດຕັ້ງປະຕິບັດ ມະຕິກອງປະຊຸມ ຄະນະບໍລິຫານງານສູນກາງພັກ ຄັ້ງທີ 11 ( ສະໄໝທີ VII ) ແລະ ມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ V ໃຫ້ປະກົດຜົນເປັນຈິງ, ໂດຍມີທິດທາງ, ໜ້າທີ່, ບັນດາຄາດໝາຍຕົ້ນຕໍ ແລະ ການດຸ່ນດ່ຽງໃຫຍ່ໆ ຂອງເສດຖະກິດມະຫາພາກ; ຄາດການລຶບລ້າງ ຄວາມທຸກຍາກ, ຫລຸດຜ່ອນການຖາງປ່າ-ເຮັດໄຮ່; ກຳນົດໂຄງປະກອບພັດທະນາ ຕາມຂະ

ຕາມຂະແໜງການ ແລະ ການພັດທະນາເຂດແຄວ້ນ; ກໍານົດແຜນງານໂຄງການ, ແຜນເງິນ, ແຜນຄົນ, ບັນດາມາດຕະການ ແລະ ວິທີການຕົ້ນຕໍ ເພື່ອຈັດຕັ້ງປະຕິບັດຈຸດໝາຍລວມ, ທິດທາງ ແລະ ຄາດໝາຍສູ້ຊົນ ທີ່ກໍານົດໄວ້ ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010).

**ມາດຕາ 3: ຄາດໝາຍສູ້ຊົນ ດ້ານເສດຖະກິດມະຫາພາກ ໃນສົກປີ 2005-2006 ມີດັ່ງນີ້ :**

- ລວມຍອດຜະລິດຕະພັນພາຍໃນ (GDP) ທຽບໃສ່ສົກປີ 2004-05 ເພີ່ມຂຶ້ນລະຫວ່າງ 7,5-8% (ເປັນມູນຄ່າໃນປີ ປະມານ 33.300 ຕື້ກີບ) ໃນນັ້ນ :
  + ຍອດຜະລິດຕະພັນກະສິກໍາ-ປ່າໄມ້ ໃຫ້ເພີ້ມຂື້ນ 3,5-3,8% ກວມເອົາ 43,6% ຂອງ GDP.
  + ຍອດຜະລິດຕະພັນອຸດສາຫະກໍາ ໃຫ້ເພີ້ມຂຶ້ນ 14% ກວມເອົາ 29,7% ຂອງ GDP.
  + ການບໍລິການໃຫ້ເພີ້ມຂື້ນ 9-10% ກວມເອົາ 26,7% ຂອງ GDP.
- GDP ສະເລັ່ຽໃສ່ຫົວຄົນ ປະມານ 5,88 ລ້ານກີບ ຫລື ເທົ່າກັບປະມານ 529 ໂດລາ, ທຽບໃສ່ສົກປີຜ່ານມາເພີ່ມຂື້ນ 7,7% .
- ເກັບລາຍຮັບງົບປະມານພາຍໃນໃຫ້ໄດ້ 4.100 ຕື້ກີບ ຫລື ເທົ່າກັບ 12,3% ຂອງ GDP, ທຽບໃສ່ສົກປີຜ່ານມາເພີ່ມຂື້ນ 19,7%, ລາຍຈ່າຍງົບປະມານບໍ່ໃຫ້ເກີນ 7.390 ຕື້ກີບ ຫລື ເທົ່າກັບ 22,2% ຂອງ GDP ແລະ ການຂາດດຸນງົບປະມານພາຍໃນ ໃຫ້ຢູ່ໃນລະດັບ 8,3% ຂອງ GDP.
- ຊຸກຍູ້ການສົ່ງອອກໃຫ້ເພີ້ມຂື້ນ 15% ທຽບໃສ່ປີຜ່ານມາ.
- ຄວບຄຸມການເພີ່ມຂື້ນ ຂອງບໍລິມາດເງິນລວມ ( M2 ) ບໍ່ໃຫ້ເກີນ 18% ທຽບໃສ່ປີຜ່ານມາ.
- ການຄຸ້ມຄອງອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ມີຄວາມສະຫງົບຢ່າງໜັກແໜ້ນກ່ວາເກົ່າ.
- ຕັ້ງໜ້າລະດົມການລົງທຶນທັງໝົດ ເຂົ້າໃນການພັດທະນາໃຫ້ໄດ້ ບໍ່ຫລຸດ 30% ຂອງ GDP, ໃນນີ້: ເປັນການລົງທຶນຈາກ ງົບປະມານຂອງລັດ ປະມານ 11% ຂອງ GDP.
- ຂົນຂວາຍການຊ່ວຍເຫລືອລ້າ ແລະ ການກູ້ຢືມຈາກຕ່າງປະເທດ ໃຫ້ໄດ້ປະມານ 496 ລ້ານໂດລາ.
- ຫລຸດຜ່ອນຈໍານວນຄອບຄົວທຸກຍາກລົງ ໃຫ້ໄດ້ປະມານ 33.000 ຄອບຄົວ, ຫລຸດຜ່ອນເນື້ອທີ່ໄຮ່ເລື່ອນລອຍໃຫ້ໄດ້ 7.000 ເຮັກຕາ.
- ຂຸດຄົ້ນໄມ້ ບໍ່ໃຫ້ເກີນ 370.000 ແມັດກ້ອນ.
- ສູ້ຊົນຜະລິດເຂົ້າໃຫ້ໄດ້ 2,65 ລ້ານໂຕນ.

ມາດຕາ 4: ໃຫ້ສູ້ຊົນປະຕິບັດ ແຜນລາຍຮັບ ແລະ ລາຍຈ່າຍ ງົບປະມານປະຈໍາປີ ຕາມຕົວເລກທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ ໃຫ້ປະກົດເປັນຈິງ ຄື :

**4.1** ລວມຍອດລາຍຮັບທັງໝົດ ( ນັບທັງທຶນຊ່ວຍເຫລືອລ້າ ) 4.636 ຕື້ກີບ , ໃນນັ້ນ: ລາຍຮັບງົບປະມານ ພາຍໃນ 4.100 ຕື້ກີບ , ທຽບໃສ່ການປະຕິບັດໃນສົກປີຜ່ານມາ ເພີ່ມຂື້ນ 19,8% , ໃນນັ້ນ:

| | |
|---|---|
| + ຈາກສ່ວຍສາອາກອນ | 1.670 ຕື້ກີບ |
| + ຈາກພາສີຂາເຂົ້າຂາອອກ | 1.294 ຕື້ກີບ |

+ ຈາກທີ່ດິນ 43 ຕື້ກີບ

+ ຈາກຊັບສິນຂອງລັດ 943 ຕື້ກີບ

+ ລາຍຮັບ ຈາກຊັບພະຍາກອນປ່າໄມ້ 150 ຕື້ກີບ

+ ລາຍຮັບຈາກການຊ່ວຍເຫລືອລ້າ ຂອງຕ່າງປະເທດ ນັບທັງເປັນໂຄງການ ແລະ ບໍ່ເປັນໂຄງການ 536 ຕື້ກີບ

4.2. ແຜນລາຍຈ່າຍງົບປະມານແຫ່ງລັດທັງໝົດແມ່ນ 7.390 ຕື້ກີບ ຫຼື ເທົ່າກັບ 22% ຂອງ GDP, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 26,9%. ລາຍຈ່າຍ ຕົ້ນຕໍ ໃນສົກປີ 2005-2006 ມີດັ່ງນີ້ :

| | | |
|---|---|---|
| 1. ລາຍຈ່າຍເງິນເດືອນ, ເງິນນະໂຍບາຍ | 1.740 | ຕື້ກີບ |
| 2. ລາຍຈ່າຍບໍລິຫານ | 576,3 | ຕື້ກີບ |
| 3. ລາຍຈ່າຍດັດສົມ | 279,7 | ຕື້ກີບ |
| 4. ລາຍຈ່າຍເງິນແຮຂອງລັດຖະບານ | 40 | ຕື້ກີບ |
| 5. ລາຍຈ່າຍເງິນສະສົມຂອງລັດຖະບານ | 40 | ຕື້ກີບ |
| 6. ລາຍຈ່າຍໜີ້ສິນຕ່າງໆ | 1.065 | ຕື້ກີບ |
| + ຈ່າຍຊໍາລະໜີ້ສິນຕ່າງປະເທດ | 735 | ຕື້ກີບ |
| + ຈ່າຍຊໍາລະໜີ້ສິນພາຍໃນ | 330 | ຕື້ກີບ |
| 7. ລາຍຈ່າຍການລົງທຶນຂອງລັດ | 3.649 | ຕື້ກີບ |
| + ແຫ່ງທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ | 3.225 | ຕື້ກີບ |
| + ແຫ່ງທຶນພາຍໃນ | 424 | ຕື້ກີບ |
| - ຈ່າຍລົງທຶນປົກກະຕິ | 362 | ຕື້ກີບ |
| -ຈ່າຍໂຄງການບູລະນະທາງຫຼວງແຫ່ງຊາດ | 52 | ຕື້ກີບ |
| -ຈ່າຍໂຄງການກອງທຶນບູລະນະປ່າໄມ້ | 10 | ຕື້ກີບ |

| | | |
|---|---|---|
| 4.3. ແຫລ່ງດຸ່ນດ່ຽງທັງຫມົດ: | 2.754 | ຕື້ກີບ |
| ໃນນັ້ນ: | | |
| - ກູ້ຢືມ ແລະ ຊ່ວຍເຫລືອຈາກຕ່າງປະເທດ | 2.734 | ຕື້ກີບ |
| - ພັນທະບັດຄັງເງິນ | 20 | ຕື້ກີບ |

ມາດຕາ 5: ມອບໃຫ້ ຄະນະກໍາມະການແຜນການ ແລະ ການລົງທຶນ ປະຕິບັດດັ່ງນີ້:

5.1 ອອກແຈ້ງການ ໄປຍັງຂະແໜງການ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ໃນສົກປີ 2005-2006 ຕາມທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ ຈໍານວນ 2.328 ໂຄງການ ລວມເປັນມູນຄ່າທັງໝົດ 3.469 ຕື້ກີບ, ໃນນັ້ນ ທຶນພາຍໃນ 424 ຕື້ກີບ ແລະ ທຶນຕ່າງປະເທດ 3.225 ຕື້ກີບ, ໂດຍໃຫ້ປະຕິບັດຢ່າງເຂັ້ມງວດ ຕາມດໍາລັດເລກທີ 58/ນຍ ວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດ;

ສ້າງລະບຽບການ ແລະ ມາດຕະການ, ກົນໄກ ເພື່ອຕິດຕາມ ກວດກາ ແລະ ຄວບຄຸມການປະຕິບັດໃຫ້ເປັນຮູບປະທຳ.

ທຸກໂຄງການລົງທຶນທີ່ນຳໃຊ້ແຫລ່ງທຶນຂອງລັດ, ນັບທັງການລົງທຶນຂອງລັດ ໃຫ້ແກ່ລັດວິສາຫະກິດ, ການສົມທົບທຶນຂອງລັດກັບພາກເອກະຊົນ, ການປະກອບຫຸ້ນຂອງລັດໃນການສ້າງຕັ້ງວິສາຫະກິດປະສົມກັບພາຍໃນ ຫລື ຕ່າງປະເທດ ລ້ວນແຕ່ຕ້ອງໄດ້ສ່ອງແສງໃຫ້ເຫັນຜ່ານແຜນການລົງທຶນຂອງລັດ ແລະ ມີການສ້າງບົດວິພາກເສດຖະກິດ-ເຕັກນິກກ່ອນການອະນຸຍາດໃຫ້ລົງທຶນ; ບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ຕ້ອງເຂັ້ມງວດປະຕິບັດວຽກງານ ຕິດຕາມ ກວດກາ ແລະ ປະເມີນຜົນໂຄງການລົງທຶນ ຂອງລັດ ຕາມລະບຽບການແບ່ງຂັ້ນຄຸ້ມຄອງທີ່ມີແລ້ວ.

5.2. ສົມທົບກັບ ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ບັນດາພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ, ວິໄຈ, ຕິດຕາມ, ພະຍາກອນ ສະພາບເສດຖະກິດມະຫາພາກ ແລະ ຊອກເຫັນມາດຕະການ, ວິທີການແກ້ໄຂທີ່ຄົບຊຸດ ແລະ ມີປະສິດທິພາບ ເພື່ອສະເໜີລັດຖະບານພິຈາລະນາຢ່າງທັນການ.

5.3. ສົມທົບກັບ ກະຊວງການເງິນ ເພື່ອສ້າງແຜນຊຳລະໜີ້ສິນ ໂຄງການລົງທຶນຂອງລັດ ທີ່ຄ້າງຊຳລະຜ່ານມາຢ່າງລະອຽດ ແລະ ໃຫ້ໄດ້ຕາມແຜນການຊຳລະທີ່ ກຳນົດໄວ້.

5.4. ສົມທົບກັບພາກສ່ວນກ່ຽວຂ້ອງ ສືບຕໍ່ປັບປຸງກົນໄກການສ້າງ ແລະ ສັງລວມແຜນການ 5 ປີ ແລະ ແຜນການປະຈຳປີ ໃຫ້ແທດເໝາະກັບຕົວຈິງ; ຄົ້ນຄວ້າຜັນຂະຫຍາຍ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ໄປຄຽງຄູ່ກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2005-2006 ແຕ່ຫົວທີ.

5.5. ສົມທົບກັບຂະແໜງການ ແລະ ທ້ອງຖິ່ນຕ່າງໆ ຄົ້ນຄວ້າເອກະສານໂຄງການລະອຽດ, ໂດຍສະເພາະໂຄງການໃໝ່ ທີ່ເປັນບູລິມະສິດ ຊຶ່ງໄດ້ຈັດເຂົ້າໃນແຜນການລົງທຶນຂອງລັດ . ສຳລັບແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ VI (2006-2010) ແລ້ວນັ້ນ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ ໃນແຕ່ລະປີ.

5.6. ສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ເຜີຍແຜ່ຜົນຂອງການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງທີ III ເພື່ອໃຫ້ພາກສ່ວນຕ່າງໆ ນຳໄປຄົ້ນຄວ້າ, ນຳໃຊ້ເຂົ້າໃນການວາງແຜນ ແລະ ວຽກງານອື່ນໆທີ່ຈຳເປັນ ຂອງຕົນ ໃຫ້ແທດເໝາະກັບສະພາບຕົວຈິງ; ພ້ອມດຽວກັນນັ້ນ ສືບຕໍ່ປັບປຸງ ລະບົບຂໍ້ມູນສະຖິຕິເພື່ອຕອບສະໜອງຄວາມຕ້ອງການຢ່າງທັນເວລາ; ດຳເນີນການສຳຫລວດ ສະພາບຄວາມທຸກຍາກ ແລະ ສຳຫລວດສຸຂະພາບຈະເລີນພັນ ເພື່ອຮັບໃຊ້ໃຫ້ແກ່ການວາງແຜນແກ້ໄຂຄວາມທຸກຍາກ ແລະ ການປະຕິບັດນະໂຍບາຍປະຊາກອນ.

5.7. ສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ສືບຕໍ່ປັບປຸງແກ້ໄຂບັນດາກົນໄກ, ນະໂຍບາຍສົ່ງເສີມ ແລະ ປົກປ້ອງການລົງທຶນ, ປັບປຸງຂັ້ນຕອນກ່ອນ ແລະ ຫລັງການອະນຸຍາດການລົງທຶນ ໂດຍຫັນເປັນອັນລະອຽດດຳລັດວ່າ ດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຄຸ້ມຄອງ ແລະ ສົ່ງເສີມການລົງທຶນ ຂອງຕ່າງປະເທດ; ລະດົມການລົງທຶນ ຈາກພາກທຸລະກິດຂອງລັດ ແລະ ເອກະຊົນພາຍໃນປະເທດ ແລະ ຕ່າງປະເທດ ຢ່າງແຂງແຮງ; ສ້າງ ແລະ ບູລະນະຕື່ມ ບັນດາກົນໄກສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ສືບຕໍ່ປະຕິບັດການບໍລິການຜ່ານປະຕູດຽວ ແລະ ມອບສິດອຳນາດໃຫ້ທ້ອງຖິ່ນ ມີສິດອະນຸມັດການລົງທຶນ

ໃນຂະແໜງການບູລິມະສິດ ແລະ ການອະນຸມັດນຳເຂົ້າພາຫະນະ ແລະ ວັດຖຸດິບຕາມລະບຽບການທີ່ໄດ້ກຳນົດອອກແລ້ວ; ຊຸກຍູ້ຢ່າງແຂງແຮງ ການລົງທຶນເຂົ້າໃສ່ຂະແໜງທີ່ມີທ່າແຮງ; ປັບປຸງລະບຽບການນຳເຂົ້າແຮງງານ ທີ່ມີລະດັບເຕັກນິກສູງ ໃຫ້ແກ່ການລົງທຶນຂອງຕ່າງປະເທດ, ພັດທະນາແຮງງານລາວ ແລະ ສະໜອງໃຫ້ພຽງພໍກັບຄວາມຕ້ອງການ; ຈຳກັດ, ຫລຸດຜ່ອນ ແລະ ກ້າວໄປເຖິງ ການລົບລ້າງຂັ້ນຂອດ, ບາຣິແຢ, ການກວດກາ ທີ່ບໍ່ຈຳເປັນ.

5.8. ສົມທົບກັບກະຊວງການຕ່າງປະເທດ ເຜີຍແຜ່ໂຄສະນາ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ ແກ່ການລົງທຶນຕ່າງປະເທດ, ເພີ່ມທະວີການຍາດແຍ່ງທຶນຊ່ວຍເຫລືອລ້າ ແລະ ທຶນກູ້ຢືມ(ODA) ດ້ວຍຫລາຍຮູບການ; ຈັດການສຳມະນາແລກປ່ຽນປະສົບການ ແລະ ຄຳເຫັນລະຫວ່າງອົງການມະຫາພາກ ກັບຜູ້ໃຫ້ທຶນ, ກັບວິສາຫະກິດພາຍໃນ ແລະ ຕ່າງປະເທດ; ຕິດຕາມ ແລະ ຕີລາຄາສະພາບການດຳເນີນທຸລະກິດຂອງທຸກພາກສ່ວນເສດຖະກິດ ເພື່ອປະຕິບັດນະໂຍບາຍຍ້ອງຍໍແກ່ຫົວໜ່ວຍທີ່ເຄື່ອນໄຫວດີ ແລະ ມີຜົນງານ.

5.9. ສືບຕໍ່ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດຍຸດທະສາດແຫ່ງການເຕີບໂຕ ແລະ ລົບລ້າງຄວາມທຸກຍາກແຫ່ງຊາດ, ໂດຍສະເພາະແມ່ນ ສູ້ຊົນສ້າງແຜນພັດທະນາກຸ່ມບ້ານ ທີ່ເປັນບູລິມະສິດ ຈຸດສຸມ ໃຫ້ໄດ້ 37 ກຸ່ມບ້ານ ຂອງ 37 ເມືອງເປົ້າໝາຍລົບລ້າງຄວາມທຸກຍາກທີ່ຍັງເຫລືອ ເພື່ອນຳໄປເປັນບ່ອນອີງໃນການຈັດສັນງົບປະມານການລົງທຶນ ແລະ ສະເໜີຕໍ່ຜູ້ໃຫ້ທຶນ ເພື່ອໃຫ້ໄດ້ດຳເນີນການພັດທະນາທັງໝົດ ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ນີ້; ສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ກະກຽມສະຫລຸບວຽກງານລົບລ້າງຄວາມທຸກຍາກ ໃນຂອບເຂດທົ່ວປະເທດ ເພື່ອຖອດຖອນບົດຮຽນ ໃນທ້າຍປີ 2005 ນີ້.

ມາດຕາ 6: ມອບໃຫ້ກະຊວງການເງິນ ປະຕິບັດດັ່ງນີ້:

6.1. ເອົາໃຈໃສ່ຈັດຕັ້ງປະຕິບັດແຜນງົບປະມານສົກປີ 2005-2006, ໂດຍສະເພາະສູ້ຊົນຂຸດຄົ້ນແຫຼ່ງລາຍຮັບໃຫ້ບັນລຸຕາມຕົວເລກຄາດໝາຍ ທີ່ສະພາແຫ່ງຊາດຮັບຮອງເອົາ ໂດຍເລັ່ງໃສ່ໜ້າວຽກຈຸດສຸມດັ່ງນີ້: ❶ ຮີບຮ້ອນຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍພາສີ, ກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່ ແລະ ນິຕິກຳຕ່າງໆທາງດ້ານການເງິນ ໃຫ້ຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບ ໃນຂອບເຂດ ທົ່ວປະເທດ; ປະຕິບັດມາດຕະການຢ່າງເຂັ້ມງວດ ຕໍ່ກໍລະນີຍົກເວັ້ນ ຫຼື ຫຼຸດຜ່ອນພາສີ, ອາກອນ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ; ❷ ຄົ້ນຄ້ວາ ແລະ ອອກນະໂຍບາຍປະຢັດແຫ່ງຊາດ, ໃນນັ້ນ ອັນຮີບດ່ວນແມ່ນການປະຢັດນ້ຳມັນເຊື້ອໄຟ; ❸ ເກັບກຳ, ຄຸ້ມຄອງ-ກວດກາແຫຼ່ງລາຍຮັບຈາກຊັບສິນຂອງລັດ, ເຊັ່ນ: ຄ່າສຳປະທານຂຸດຄົ້ນຊັບພະຍາກອນບໍ່ແຮ່, ຄ່າສຳປະທານທີ່ດິນ, ເງິນປັນຜົນກຳໄລ, ຄ່າເຊົ່າ, ເງິນຈາກການຂາຍຊັບສິນ, ເງິນບິນຜ່ານ, ລາຍຮັບຈາກຫວຍພັດທະນາ ແລະ ຫວຍກິລາ, ບັນດາກອງທຶນຕ່າງໆ; ຄົ້ນຄວ້າ ປັບປຸງ ວິສາຫະກິດຂອງລັດ, ວິສາຫະກິດຫຸ້ນສ່ວນໃຫ້ເຄື່ອນໄຫວຢ່າງມີປະສິດທິຜົນ, ມີຄວາມສາມາດເປັນເຈົ້າພາທາງໃຫ້ພາກສ່ວນເສດຖະກິດອື່ນ, ຫຼີກລ້ຽງການເກື້ອກູນຈາກງົບປະມານຂອງລັດ; ❹ ຄຸ້ມຄອງເກັບລາຍຮັບຈາກການຂາຍໄມ້ ທີ່ລັດຖະບານໄດ້ອະນຸຍາດໃຫ້ຖືກຕ້ອງ ແລະ ຄົບຖ້ວນ, ເຊັ່ນ: ໄມ້ທີ່ຂຸດຄົ້ນຈາກເຂດເຂື່ອນໄຟຟ້ານ້ຳຕົກຕ່າງໆ, ໄມ້ຕາມແລວສາຍໄຟ, ໄມ້ໂກຕາຂອງແຂວງທັງໝົດ ຊຶ່ງຕ້ອງມອບລວມສູນເຂົ້າເປັນລາຍຮັບງົບປະມານແຫ່ງລັດ ແລະ ແຍກລາຍຮັບໄມ້ໂກຕາຂອງລັດຖະບານ ແມ່ນມອບເປັນພູດລາຍຮັບສູນກາງ, ໄມ້ໂກຕາຂອງແຂວງ ແມ່ນມອບເປັນພູດລາຍຮັບຂອງທ້ອງຖິ່ນ; ❺ ຊອກ

ຫາແຫຼ່ງເງິນກູ້ຢືມ ທີ່ບໍ່ມີເງື່ອນໄຂຜູກມັດຫຼາຍ, ດອກເບ້ຍຕ່ຳ, ໄລຍະກູ້ຍາວ ເພື່ອປະຕິບັດໂຄງການພັດທະນາ ທີ່ເປັນບູລິມະສິດ; ❻ ຊຸກຍູ້ໃຫ້ບັນດາຫົວໜ່ວຍທຸລະກິດທຸກປະເພດ ຖືບັນຊີຢ່າງຖືກຕ້ອງຕາມລະບຽບກົດໝາຍ ໂດຍເລັ່ງໃສ່ບັນດາຫົວໜ່ວຍທຸລະກິດຂະໜາດໃຫຍ່, ຂະໜາດກາງ ແລະ ຫຼຸດຜ່ອນການເສຍອາກອນແບບມອບເໝົາເທື່ອລະກ້າວ; ❼ ປະຕິບັດນະໂຍບາຍຍົກເວັ້ນອາກອນກຳໄລ ແລະ ອາກອນເງິນເດືອນໃຫ້ແກ່ວິສາຫະກິດ ທີ່ໄປລົງທຶນຢູ່ເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ; ❽ ເອົາໃຈໃສ່ຈັດຕັ້ງການເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມລັດຖະບັນຍັດສະບັບເລກທີ 02 ຂອງປະທານປະເທດ; ❾ ຄົ້ນຄ້ວາ ວາງນະໂຍບາຍການຫັນຊັບສິນໃຫ້ເປັນທຶນ ພ້ອມທັງສ້າງ ແລະ ປັບປຸງບັນດາກົດລະບຽບ ແລະ ລະບຽບການທີ່ພົວພັນເຖິງ ການຫັນຊັບສິນໃຫ້ເປັນທຶນ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້ໃນສົກປີນີ້; ❿ ຄົ້ນຄ້ວາ ອອກລະບຽບການບໍລິການສິນຄ້າຜ່ານແດນ ເພື່ອສາມາດນຳໃຊ້ທ່າແຮງດ້ານທີ່ຕັ້ງເປັນໃຈກາງຂອງປະເທດເຮົາໃຫ້ມີຜົນປະໂຫຍດ ແລະ ມີປະສິດທິຜົນ; 11 ຄົ້ນຄວ້າປັບປຸງອັດຕາເກັບພາສີທີ່ດິນ ໃນເຂດທຸລະກັນດານ ແລະ ອັດຕາພາສີ ແລະ ຄ່າທຳນຽມທີ່ດິນປະເພດອື່ນໆໃຫ້ສອດຄ່ອງ; 12 ຄົ້ນຄ້ວາອອກບົດແນະນຳລະອຽດກ່ຽວກັບ ການປະຕິບັດວິທີການໃຫ້ບຳເນັດຢ່າງເໝາະສົມ.

6.2. ສືບຕໍ່ປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ ແລະ ແບບແຜນວິທີເຮັດວຽກ ເປັນຕົ້ນແມ່ນຂອງຂະແໜງພາສີ, ສ່ວຍສາອາກອນ, ຄັງເງິນ, ຊັບສິນລັດ, ທີ່ດິນ ແລະ ກົມງົບປະມານໃຫ້ສອດຄ່ອງ, ມີປະສິດທິພາບ ແລະ ມີຄວາມບໍລິສຸດປອດໃສ ໂດຍມີການອອກບົດແນະນຳທີ່ຈະແຈ້ງ ກ່ຽວກັບການແບ່ງຄວາມຮັບຜິດຊອບລະຫວ່າງສູນກາງກັບທ້ອງຖິ່ນ; ກຳນົດປະເພດດ່ານນຳເຂົ້າ ແລະ ສົ່ງອອກສິນຄ້າ ໃນແຕ່ລະທ້ອງຖິ່ນໃຫ້ເຫມາະສົມກັບຄວາມສາມາດ ແລະ ເງື່ອນໄຂຄຸ້ມຄອງຕົວຈິງຂອງແຕ່ລະດ່ານ, ລາຍຮັບພາສີຂາເຂົ້າ ໃຫ້ຈົດເຂົ້າເປັນພູດລາຍຮັບສູນກາງ ຕາມທີ່ໄດ້ກຳນົດໄວ້ຢູ່ໃນດຳລັດ 192/ນຍ ແລະ ເອົາເຂົ້າບັນຊີສະເພາະ ທີ່ກົມຄັງເງິນ ເປີດຢູ່ທະນາຄານແຕ່ລະແຂວງ ເພື່ອເກັບລາຍຮັບດັ່ງກ່າວ; ວາງລະບຽບການກ່ຽວກັບການກວດກາ-ກວດກາ ການປະຕິບັດໜ້າທີ່ຂອງພະນັກງານພາສີ, ອາກອນ, ຊັບສິນລັດທີ່ດິນ ແລະພະນັກງານການເງິນທຸກຂັ້ນ ແລ້ວດຳເນີນ ການກວດກາຢ່າງເປັນປົກກະຕິ; ປະຕິບັດການລົງວິໄນ ຢ່າງເຂັ້ມງວດ ຕໍ່ຜູ້ລະເມີດ ລະບຽບກົດຫມາຍ ແລະ ຍ້ອງຍໍຜູ້ທີ່ມີ ຜົນງານຢ່າງເຫມາະສົມ ແລະ ທັນການ.

6.3. ໃຫ້ບັນດາກົມມະຫາພາກ ຂອງກະຊວງ ເອົາໃຈໃສ່ລົງຊຸກຍູ້, ຕິດຕາມກວດກາ ການເກັບລາຍຮັບ ແລະການປະຕິບັດລາຍຈ່າຍຢ່າງເປັນປົກກະຕິ ຢ່າງຕ່ຳງວດໜຶ່ງເທື່ອໜຶ່ງ; ຂະແໜງພາສີ ແລະ ສ່ວຍສາອາກອນ ຮີບຮ້ອນຈັດຕັ້ງຜູ້ກວດກາ-ກວດການ ປະຈຳແຂວງຂຶ້ນ ພ້ອມທັງປັບປຸງລະບົບເຄື່ອງມືຮັບໃຊ້ ການເຄື່ອນໄຫວວຽກງານພາສີ ອາກອນໃຫ້ທັນສະໄໝ, ຈັດຕັ້ງເກັບກຳຂໍ້ມູນສະຖິຕິແຫຼ່ງລາຍຮັບພາສີອາກອນຢ່າງເປັນລະບົບຄົບຊຸດ; ວາງມາດຕະການ ທີ່ມີປະສິດທິພາບ ເພື່ອສະກັດກັ້ນ ແລະ ປາບປາມການລັກລອບຫຼົບຫຼີກໜີພາສີ-ອາກອນ, ການຄ້າເຖື່ອນ ແລະ ການຄ້າສິ່ງຜິດກົດໝາຍອື່ນໆ ໃນທຸກຮູບແບບ ແນໃສ່ເຮັດໃຫ້ການຈັດເກັບລາຍຮັບມີປະສິດທິພາບ ແລະ ສາມາດກວດສອບໄດ້ ທັງຢູ່ສູນກາງ, ແຂວງ, ເມືອງແລະ ບ້ານ ຢ່າງມີປະສິດທິພາບ.

6.4. ສົມທົບກັບທະນາຄານແຫ່ງ ສປປ ລາວ ແລະ ຄະນະກຳມະການແຜນການ ແລະ ການລົງທຶນຄົ້ນຄວ້າສ້າງແຜນດຸນດ່ຽງເງິນຕາລວມ ແລະ ເງິນຕາຕ່າງປະເທດ ເພື່ອດຸ່ນດ່ຽງທົ່ວເສດຖະກິດແຫ່ງຊາດ ແນໃສ່ຮັກສາສະຖຽນລະພາບຂອງເສດຖະກິດ ໃຫ້ມີຄວາມໝັ້ນທ່ຽງ.

6.5. ຄົ້ນຄວ້າ ຊອກຫາແຫລ່ງລາຍຮັບໃຫມ່ເພີ່ມເຕີມ ທີ່ຍັງມີຄວາມອາດສາມາດ ຢູ່ນຳບາງຂະແໜງການ ແລະ ແຂວງຕ່າງໆ ເພື່ອຮັບປະກັນໃຫ້ລາຍຮັບງົບປະມານ ສາມາດເກັບໄດ້ຢ່າງສະໝ່ຳສະເໝີ ແລະ ມີຄວາມໝັ້ນຄົງ.

6.6. ຄຸ້ມຄອງລາຍຈ່າຍໃຫ້ໄປຕາມແຜນງົບປະມານຢ່າງເຂັ້ມງວດ ແລະ ສູ້ຊົນໃຫ້ໄດ້ ຕາມຕົວເລກ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ; ຈັດບູລິມະສິດລາຍຈ່າຍຢ່າງຖືກຕ້ອງຕາມທິດທາງ ທີ່ໄດ້ກຳນົດໄວ້; ສົມທົບກັບທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ກວດກາຮ່ວງລາຍຈ່າຍເງິນເດືອນ ໃຫ້ຖືກຕາມບັນຊີລັດຖະກອນທີ່ແທ້ຈິງ; ຄົ້ນຄວ້າ ອອກບົດແນະນຳ ກ່ຽວກັບກົນໄກການຄຸ້ມຄອງຄັງເງິນເດືອນ ແລະ ການເບີກຈ່າຍເງິນເດືອນໃຫ້ສອດຄ່ອງ ເພື່ອຮັບປະກັນໃຫ້ພະນັກງານ, ທະຫານ, ຕຳຫລວດ ໄດ້ຮັບເງິນເດືອນປົກກະຕິ ພ້ອມກັນນັ້ນ ກໍຄົ້ນຄວ້າ ກົນໄກ ແລະ ວິທີການດຸ່ນດ່ຽງງົບປະມານ ລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ແທດເໝາະກັບສະພາບການຕົວຈິງ ເພື່ອຮັບປະກັນໃຫ້ການປະຕິບັດ ແຜນລາຍຮັບ-ລາຍຈ່າຍງົບປະມານທົ່ວປະເທດ ມີຄວາມຄ່ອງຕົວ ແລະ ບໍ່ມີຄວາມເຄັ່ງຕຶງ.

6.7. ສົມທົບກັບກະຊວງການຕ່າງປະເທດ, ຄຜທ ແລະ ຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າແຜນແມ່ບົດເງິນກູ້, ແຜນການຊຳລະສະສາງໜີ້ສິນຕ່າງປະເທດ ທີ່ກວມລາຍຈ່າຍສູງໃນປັດຈຸບັນ; ຊອກວິທີການເຈລະຈາກັບເຈົ້າໜີ້ ຄືນໃໝ່, ເພື່ອປັບໂຄງສ້າງໜີ້ໃຫ້ມີລັກສະນະຄ່ອງຕົວ, ມີແຜນການຍືດເວລາ ການຊຳລະໜີ້ໄປໄລຍະຍາວ ໂດຍສະເໜີເງື່ອນໄຂຈະໃຊ້ເງິນເຍື້ອນໜີ້ເຫຼົ່ານີ້ ໄປປະຕິບັດເປົ້າໝາຍແກ້ໄຂຄວາມທຸກຍາກ ຕາມເປົ້າໝາຍ ສະຫັດສະຫວັດ (MDG), ແຕ່ບໍ່ແມ່ນເງື່ອນໄຂ ທີ່ປະເທດເຮົາເຂົ້າເປັນປະເທດທີ່ມີໜີ້ສິນໜັກໜ່ວງ (HIPC); ຄົ້ນຄວ້າຈັດລຽງ ບັນຊີລາຍຊື່ເຈົ້າໜີ້ເພື່ອເຈລະຈາ ແລະ ນຳສະເໜີໃຫ້ລັດຖະບານ ພິຈາລະນາ ເພື່ອເປັນບ່ອນອີງ ໃນການເຈລະຈາກັບສາກົນ ແລະ ເຈົ້າໜີ້ .

6.8. ສົມທົບກັບກະຊວງກະສິກຳ-ປ່າໄມ້ ແລະ ກະຊວງການຄ້າ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ ການຂຸດຄົ້ນ ແລະ ທຸລະກິດໄມ້ ຕາມມະຕິ ຂອງສະພາແຫ່ງຊາດ ທີ່ໄດ້ອະນຸມັດໂກຕາໄມ້ ໃນສົກປີ 2005-2006 ຈຳນວນ 370.000 ແມັດກ້ອນ ແລະ ຕາມຄຳສັ່ງຂອງນາຍົກລັດຖະມົນຕີ ກ່ຽວກັບ ການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ປະຈຳສົກປີ 2005-2006.

6.9. ສົມທົບກັບບັນດາແຂວງ ຄົ້ນຄວ້າກົນໄກການຈັດຕັ້ງ ແລະ ວິທີການ ແບ່ງຄວາມຮັບຜິດຊອບ ເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ຈະແຈ້ງ ໂດຍປະຕິບັດຕາມ ດຳລັດເລກທີ 192/ນຍ ຢ່າງເຂັ້ມງວດ, ໂດຍອຳນາດການປົກຄອງທ້ອງຖິ່ນ ມີໜ້າທີ່ຮັບຜິດຊອບ ຈັດຕັ້ງປະຕິບັດ ການຈັດເກັບລາຍຮັບຕາມກົດໝາຍ ແລະ ລະບຽບການກ່ຽວກັບ ພາສີ-ອາກອນ, ຊັບສິນລັດ, ທີ່ດິນ, ແລະ ກົດໝາຍງົບປະມານ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ. ພ້ອມກັນນັ້ນ ກໍໃຫ້ແຍກລາຍຮັບທີ່ເປັນພູດສູນກາງ ແລະ ພູດທ້ອງຖິ່ນ, ຊຶ່ງລາຍຮັບທີ່ເປັນພູດສູນກາງ ຕ້ອງມອບເຂົ້າບັນຊີສູນກາງ ແລະ ລາຍຮັບທີ່ເປັນພູດຂອງທ້ອງຖິ່ນ ກໍ່ມອບເຂົ້າບັນຊີຂອງທ້ອງຖິ່ນ, ໂດຍມີແຕ່ລັດຖະມົນຕີວ່າການກະຊວງການເງິນ

ຫລື ຜູ້ໄດ້ຮັບມອບສິດແທນເທົ່ານັ້ນ ຈຶ່ງສາມາດໂອນ, ເຄື່ອນຍ້າຍ ຫລື ຊຳລະສະສາງເງິນໃນບັນຊີຂອງສູນກາງໄດ້.

6.10. ປັບປຸງກົນໄກ ແລະ ລະບຽບການຈ່າຍພັນທະບັດຄັງເງິນໃຫ້ລະອຽດ, ຮັບປະກັນໃຫ້ມີປະສິດທິພາບ ແລະ ສາມາດກວດສອບໄດ້; ປັບປຸງລະບົບການຈັດຕັ້ງ ການຕິດສະແຕມສິນຄ້າ ແລະ ອື່ນໆ ໃຫ້ວ່ອງໄວຂຶ້ນ ເພື່ອສ້າງລາຍຮັບເພີ່ມເຕີມເຂົ້າງົບປະມານ.

6.11. ສືບຕໍ່ສັງລວມຂໍ້ມູນໜີ້ສິນພາຍໃນ ເຊັ່ນ: ໜີ້ຂອງງົບປະມານຕໍ່ບໍລິສັດ, ວິສາຫະກິດຂອງລັດ ແລະ ເອກະຊົນ, ໜີ້ຄ້າງຈ່າຍຢູ່ຂອດຄັງເງິນ ແລະ ຂອດງົບປະມານ; ຂະແໜງລາຍຮັບຕ້ອງອອກແຮງເລັ່ງທວງບໍລິສັດ, ວິສາຫະກິດ ທີ່ຕິດໜີ້ງົບປະມານຂອງລັດ ໃຫ້ມອບພັນທະທີ່ຕ້ອງມອບເຂົ້າຄັງເງິນໂດຍໄວ; ສັງລວມແຜນໜີ້ສິນ ແລະ ນຳສະເໜີລັດຖະບານ ກ່ຽວກັບວິທີແກ້ໄຂໜີ້ສິນດັ່ງກ່າວ; ສົມທົບກັບ ຄຜທ ເພື່ອສ້າງແຜນຊຳລະໜີ້ສິນໂຄງການລົງທຶນຂອງລັດ ຕາມຄວາມສາມາດຕົວຈິງ ຕາມທີ່ສະພາອະນຸມັດໃຫ້ສຳເລັດ ເປັນແຕ່ລະບາດກ້າວ.

6.12. ສືບຕໍ່ຄົ້ນຄວ້າ ປັບປຸງ ກົດໝາຍງົບປະມານ, ສາລະບານງົບປະມານ, ດຳລັດວ່າດ້ວຍການບັນຊີແຫ່ງລັດ; ຄົ້ນຄວ້າ ສ້າງຮ່າງນິຕິກຳ ແລະ ນະໂຍບາຍໃໝ່ທີ່ຈຳເປັນ ຈຳນວນໜຶ່ງ, ຄື: ຮ່າງກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ, ຮ່າງດຳລັດວ່າດ້ວຍການທັນຊັບສິນເປັນທຶນ, ນະໂນບາຍປະຢັດແຫ່ງຊາດ, ນະໂຍບາຍສົ່ງເສີມການລົງທຶນຢູ່ເຂດຫ່າງໄກສອກຫຼີກ, ຮ່າງດຳລັດ ວ່າດ້ວຍໃບເກັບເງິນ, ຮ່າງດຳລັດ ວ່າດ້ວຍລາຍຮັບວິຊາການ, ຄ່າເຊົ່າທີ່ດິນ, ເຮືອນຂອງລັດ, ພາສີຊັບພະຍາກອນທຳມະຊາດ, ການຈົດທະບຽນ; ພ້ອມກັນນັ້ນ ກໍ່ຄົ້ນຄວ້າປະຕິບັດນະໂຍບາຍບຳເນັດແບບໃໝ່ ໂດຍຫັນຈາກການໃຫ້ບຳເນັດ ຕາມລາຍຮັບເກີນແຜນ ມາເປັນການໃຫ້ບຳເນັດຕາມສັດສ່ວນເກັບລາຍຮັບແຕ່ລະປະເພດ ທີ່ເກັບໄດ້ຕົວຈິງ.

ມາດຕາ 7: ມອບໃຫ້ ກະຊວງການຕ່າງປະເທດ ປະຕິບັດດັ່ງນີ້:

7.1. ໃຫ້ສົມທົບກັບກະຊວງການເງິນ ເຈລະຈາກັບຜູ້ໃຫ້ທຶນ ເພື່ອຂໍຍົກເລີກທຶນສົມທົບຂອງລັດຖະບານສຳລັບ ໂຄງການທີ່ນຳໃຊ້ທຶນຊ່ວຍເຫລືອລ້າ ແລະ ກູ້ຢືມ, ໂດຍສະເພາະໂຄງການພັດທະນາວຽກງານດ້ານສັງຄົມ, ພັດທະນາຊັບພະຍາກອນມະນຸດ ແລະ ລຶບລ້າງຄວາມທຸກຍາກ.

7.2. ຄົ້ນຄວ້າ ບັນດາເງື່ອນໄຂ ແລະ ແຫລ່ງທຶນຊ່ວຍເຫລືອລ້າ ແລະ ກູ້ຢືມ ຈາກປະເທດເພື່ອນມິດ, ສະຖາບັນການເງິນ ແລະ ອົງການຈັດຕັ້ງສາກົນຕ່າງໆ ທີ່ຂົນຂວາຍໄດ້ໃນແຕ່ລະໄລຍະ ແລ້ວແຈ້ງໃຫ້ ຄຜທ ແລະ ກະຊວງການເງິນກ່ອນ ເພື່ອເປັນບ່ອນອີງໃນການສົມທົບ ກັບກະຊວງຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງ ຄົ້ນຄວ້າໂຄງການ ທີ່ຈະນຳໃຊ້ແຫລ່ງທຶນດັ່ງກ່າວ ຢ່າງຖືກຕ້ອງກັບ ທິດທາງແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄວາມສາມາດໃນການ ຊຳລະສະສາງໃນແຕ່ທີ່ວທີ.

7.3. ສະຫລຸບສັງລວມ ສະພາບການປະຕິບັດບັນດາໂຄງການຢ່າງຮອບດ້ານ ທີ່ນຳໃຊ້ທຶນຊ່ວຍເຫລືອລ້າ ແລະ ກູ້ຢືມ, ທຶນຊ່ວຍເຫລືອດ້ານວິຊາການ (TA) ແລະ ທຶນຂອງບັນດາອົງການຈັດຕັ້ງ ທີ່ບໍ່ແມ່ນລັດຖະບານ (NGOs) ເປັນແຕ່ລະງວດ(ໄຕມາດ) ລາຍງານໃຫ້ລັດຖະບານ, ຄຜທ ແລະ ກະຊວງການເງິນຢ່າງເປັນປົກກະຕິ.

7.4. ສະຫລຸບສັງລວມ, ຕີລາຄາ ແລະ ປະເມີນຜົນບັນດາໂຄງການຕ່າງໆ ທີ່ກະຊວງການຕ່າງປະເທດເປັນຜູ້ຮັບຜິດຊອບໂດຍກົງ, ໂດຍສະເພາະ ໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຈາກແຫລ່ງທຶນ IFAD, EU ແລະ NGOs ແລະ ແຫລ່ງອື່ນໆ ຢ່າງລະອຽດ ແລ້ວລາຍງານໃຫ້ ລັດຖະບານ ແລະ ຄຜທ ປະຈຳງວດ 6 ເດືອນ ແລະ ປີ ເພື່ອຄວາມສະດວກ ໃນການຕີລາຄາ ສະພາບການພັດທະນາທ້ອງຖິ່ນ ແລະ ການຈັດສັນທຶນ ເພື່ອຮັບປະກັນບໍ່ໃຫ້ຊໍ້າຊ້ອນ ກັບແຫລ່ງທຶນຂອງງົບປະມານພາຍໃນ.

ມາດຕາ 8: ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດດັ່ງນີ້:

8.1. ສືບຕໍ່ປະຕິບັດນະໂຍບາຍເງິນຕາແບບຄ່ອງຕົວ, ນະໂຍບາຍອັດຕາແລກປ່ຽນທີ່ຄ່ອງຕົວ ແລະ ນະໂຍບາຍອັດຕາດອກເບັ້ຽບວກ; ປະຕິບັດການປ່ອຍສິນເຊື່ອໃຫ້ຖືກຕ້ອງ ຕາມຫຼັກການ ແລະ ເປົ້າໝາຍສົ່ງເສີມ; ສົ່ງເສີມການນຳໃຊ້ເງິນກີບ ໃນການຊຳລະສະສາງພາຍໃນໃຫ້ຫລາຍຂຶ້ນ; ຄົ້ນຄວ້າ ອອກລະບຽບການການປະຕິບັດການຊຳລະເງິນຕາຕ່າງປະເທດ ຜ່ານລະບົບທະນາຄານ ແລະ ຄຸ້ມຄອງກະແສການໄຫລເຂົ້າ-ອອກ ຂອງເງິນຕາຕ່າງປະເທດ ຕາມລະບຽບການວາງໄວ້.

8.2. ເອົາໃຈໃສ່ສ້າງເງື່ອນໄຂໃຫ້ຄັງສຳຮອງເງິນຕາຕ່າງປະເທດເພີ່ມຂຶ້ນ; ສືບຕໍ່ຊີ້ນຳທະນາຄານທຸລະກິດເພື່ອປັບປຸງຄວາມສາມາດໃນການບໍລິການ ຂອງທະນາຄານໃຫ້ມີປະສິດທິພາບ ແລະໄດ້ມາດຕະຖານສາກົນເທື່ອລະກ້າວ ເພື່ອສ້າງຄວາມເຊື່ອຖືແກ່ລູກຄ້າ; ເພີ່ມທະວີເອົາໃຈໃຈໃສ່ການແກ້ໄຂບັນຫນີ້ສິນຄ້າງຄາ ແລະ ໜີ້ບໍ່ເກີດດອກອອກຜົນ.

8.3. ສືບຕໍ່ຄົ້ນຄວ້າໂຄງການສ້າງຄວາມເຂັ້ມແຂງ ແລະ ພັດທະນາລະບົບ ສະຖາບັນການເງິນຢູ່ ສປປລາວ ເພື່ອກະຕຸ້ນ ການພັດທະນາເສດຖະກິດ, ສ້າງຄວາມເຊື່ອຖືຕໍ່ລູກຄ້າທັງພາຍໃນ ແລະ ຕ່າງປະເທດ; ຕັ້ງໜ້າຄົ້ນຄວ້າ ແລະ ເຜີຍແຜ່ກ່ຽວກັບຕະຫລາດທຶນ ເພື່ອກະກຽມເງື່ອນໄຂກ້າວໄປສູ່ ການພັດທະນາຕະຫລາດເງິນທຶນ ໃນຕໍ່ຫນ້າ.

ມາດຕາ 9: ມອບໃຫ້ ທະນາຄານ ແຫ່ງ ສປປ ລາວ, ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຄົ້ນຄວ້າປະຕິບັດນະໂຍບາຍ " ໜຶ່ງເມືອງ ໜຶ່ງຜະລິດຕະພັນ " ໃຫ້ເປັນຮູບປະທຳ.

ມາດຕາ 10: ມອບໃຫ້ກະຊວງການຄ້າສືບຕໍ່ຄົ້ນຄວ້າ ວາງນະໂຍບາຍ ແລະ ບັນດາມາດຕະການຕ່າງໆ ເພື່ອຕິດຕາມ, ດັດສົມ ແລະ ແຊກແຊງ ຄຸ້ມຄອງລາຄາສິນຄ້າ, ລະບຽບການແບ່ງຂັ້ນຄຸ້ມຄອງການນຳເຂົ້າສິນຄ້າຍຸດທະສາດ ກັບບັນດາແຂວງ; ປັບປຸງ ແລະ ສ້າງກົນໄກທີ່ສອດຄ່ອງ ເພື່ອຊຸກຍູ້ສົ່ງເສີມ ການຜະລິດສິນຄ້າທົດແທນການນຳເຂົ້າ ແລະ ເປັນຂາອອກ; ເປີດກວ້າງຕະຫລາດສົ່ງອອກສິນຄ້າ, ເພີ່ມການຈັດງານວາງສະແດງສິນຄ້າ, ຕະຫຼາດນັດຂອງປະຊາຊົນ, ການສົ່ງເສີມການຄ້າຊາຍແດນ ແລະ ການຄ້າຜ່ານແດນໃຫ້ແຂງແຮງກວ່າເກົ່າ; ເອົາໃຈໃສ່ຄຸ້ມຄອງຮ້ານຄ້າປອດພາສີ ໃຫ້ເຄື່ອນໄຫວຢ່າງຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

ມາດຕາ 11: ມອບໃຫ້ກະຊວງກະສິກຳ-ປ່າໄມ້ ແລະ ກະຊວງການຄ້າ ຄົ້ນຄວ້າກົນໄກຄວບຄຸມທີ່ຮັດກຸມ ແລະ ເຂັ້ມງວດ ຕໍ່ການປະຕິບັດຄຳສັ່ງນາຍົກລັດຖະມົນຕີ ກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ເພື່ອຫ້າມການສົ່ງໄມ້ທ່ອນອອກສູ່ຕ່າງປະເທດ ແລະ ສະເຫນີແຜນໄລຍະສັ້ນ ແລະໄລຍະຍາວ ທີ່ມີໂຄງການລະອຽດ

ໃນການສົ່ງເສີມການປຸງແຕ່ງໄມ້ສຳເລັດຮູບ ທີ່ມີມູນຄ່າເພີ່ມສູງເພື່ອສົ່ງອອກ ໂດຍຕິດພັນກັບການປູກປ່າໄລຍະຍາວ, ສ້າງແຜນ ແລະ ມາດຕະການ ເພື່ອຄຸ້ມຄອງ ແລະ ນຳໃຊ້ປ່າທຳມະຊາດຢ່າງບໍ່ບົກແຫ້ງ ດ້ວຍການຫັນມາພັດທະນາປ່າເສດຖະກິດເປັນກ້າວໆ ເພື່ອຄວາມຍືນຍົງ ຂອງປ່າແຫຼ່ງນ້ຳ ແລະ ຊີວະນາໆພັນຂອງຊາດ; ເອົາໃຈໃສ່ປົກປັກຮັກສາສະພາບແວດລ້ອມ ແລະ ຊັບພະຍາກອນທຳມະຊາດ; ປະຕິບັດມາດຕະການຢ່າງເດັດຂາດ ແລະ ເຂັ້ມງວດຕໍ່ ທຸກການລະເມີດລະບຽບກົດໝາຍ, ເປັນຕົ້ນແມ່ນການຕັດໄມ້ທຳລາຍປ່າ ທີ່ບໍ່ໄດ້ຮັບອະນຸຍາດຈາກລັດຖະບານ.

ມາດຕາ 12: ມອບໃຫ້ກະຊວງອຸດສາຫະກຳ ແລະ ຫັດຖະກຳ, ກະຊວງການຄ້າ, ຄະນະກຳມະການແຜນ ການ ແລະ ການລົງທຶນ ແລະ ກະຊວງອື່ນໆທີ່ກ່ຽວຂ້ອງສົມທົບກັນຄົ້ນຄວ້ານະໂຍບາຍ, ກົດໝາຍ, ລະບຽບການຕ່າງໆ ເພື່ອພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດ, ເຂດອຸດສາຫະກຳ, ເຂດການຄ້າເສລີ ແລະ ການບໍລິການຜ່ານ ທີ່ລັດຖະບານໄດ້ຕົກລົງແລ້ວນັ້ນ ໃຫ້ສຳເລັດໂດຍໄວ ແນໃສ່ສົ່ງເສີມການຜະລິດ ແລະ ການບໍລິການໃຫ້ເພີ່ມຂຶ້ນ.

- ເອົາໃຈໃສ່ປະຕິບັດຍຸດທະສາດ ຫັນເປັນອຸດສາຫະກຳ ແລະ ເປັນທັນສະໄໝໃຫ້ເປັນຮູບປະທຳ ເທື່ອລະກ້າວ, ໂດຍສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຄົ້ນຄວ້າ ສ້າງໂຄງການບູລິມະສິດຜະລິດສິນຄ້າ ຫລືການບໍລິການທີ່ເປັນປາຍແຫລມ, ໂຄງການປັບປຸງຍົກລະດັບເຕັກນິກເຕັກໂນໂລຊີ ເພື່ອສະເໜີລັດຖະບານພິຈາລະນາ ເອົາເຂົ້າແຜນລົງທຶນໃນປີຕໍ່ໄປ.
- ເອົາໃຈໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດ ເລກທີ 42/ນຍ ກ່ຽວກັບການຊຸກຍູ້ ແລະ ພັດທະນາວິສາຫະກິດຂະໜາດກາງ ແລະ ນ້ອຍ ເພື່ອຊຸກຍູ້ການຜະລິດໃຫ້ກວ້າງຂວາງ, ສາມາດຕອບສະໜອງໃຫ້ແກ່ຕະຫຼາດພາຍໃນ ແລະ ເພື່ອສົ່ງອອກ, ສ້າງວຽກເຮັດງານທຳໃຫ້ແກ່ແຮງງານ ໂດຍສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດເຂົ້າຮ່ວມຢ່າງຕັ້ງໜ້າ.
- ມອບໃຫ້ຄະນະກຳມະການພະລັງງານແຫ່ງຊາດ ດຳເນີນການປະຕິບັດໂຄງການນ້ຳເທີນ 2 ແລະ ໂຄງການເຂື່ອນໄຟຟ້າອື່ນໆ ທີ່ໄດ້ຕົກລົງແລ້ວນັ້ນ ໃຫ້ດຳເນີນຢ່າງມີຄວາມຄືບໜ້າຕາມແຜນທີ່ໄດ້ກຳນົດ.
- ເອົາໃຈໃສ່ຕິດຕາມ ຊຸກຍູ້ການປະຕິບັດ ລະບຽບການຄຸ້ມຄອງການຂຸດຄົ້ນແຮ່ຄຳ, ທອງແດງ ແລະ ແຮ່ອື່ນໆຢ່າງເຄັ່ງຄັດ ຕາມກົດໝາຍ ບໍ່ແຮ່ທີ່ ວາງອອກ ແລະ ສັນຍາທີ່ໄດ້ເຊັນກັນ.

ມາດຕາ 13: ມອບໃຫ້ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ຄົ້ນຄວ້າຮ່າງດຳລັດ ກ່ຽວກັບກຳນົດໝາຍ, ມາດຖານລາຄາຫົວໜ່ວຍການກໍ່ສ້າງ, ສ້ອມແປງຕ່າງໆ ນັບທັງກຳນົດລາຄາກາງ ໃນການຄິດໄລ່ການສິ້ນເປືອງ ເພື່ອເປັນພື້ນຖານບັງຄັບໃຊ້ໃນການວາງແຜນ, ຄຸ້ມຄອງ, ກວດກາ ແລະ ປະເມີນຜົນໂຄງການ ແລະ ກິດຈະການລົງທຶນຕ່າງໆຢ່າງເປັນລະບົບ. ພ້ອມດຽວກັນນັ້ນ, ກໍ່ສົມທົບກັບກະຊວງ, ຂະແໜງການຕ່າງໆ ອອກລະບຽບການທີ່ໃຫ້ບູລິມະສິດ ແກ່ບໍລິສັດພາຍໃນຂອງລາວ (ທີ່ນຳໃຊ້ວັດສະດຸ ກໍ່ສ້າງພາຍໃນເປັນຕົ້ນຕໍ ແລະ ນຳໃຊ້ແຮງງານລາວ) ຮັບເໝົາໂຄງການກໍ່ສ້າງທີ່ໃຊ້ງົບປະມານຂອງລັດ ເພື່ອເສີມຂະຫຍາຍກຳລັງແຮງ ຂອງເສດຖະກິດພາຍໃນ ແລະ ຮັກສາຄ່າເງິນກີບໃຫ້ມີຄວາມໝັ້ນຄົງ; ໃຫ້ນຳສະເໜີຮ່າງດຳລັດດັ່ງກ່າວ ໃຫ້ລັດຖະບານ ພິຈາລະນາ ໃນງວດທີ 2 ຂອງສົກງົບປະມານປີນີ້.

- ເອົາໃຈໃສ່ປົກປັກຮັກສາ ທາງຫລວງແຫ່ງຊາດເພື່ອປະຫຍັດລາຍຈ່າຍ ໃນການສອ້ມແປງ ແລະ ເຮັດໃຫ້ມີອາຍຸການໃຊ້ງານໄດ້ຍາວນານ ດ້ວຍການເອົາໃຈໃສ່ ໃນການຊັ່ງນ້ຳຫນັກລົດບັນທຸກຢ່າງເຂັ້ມງວດ ແລະ ຫ້າມບໍ່ໃຫ້ລົດບັນທຸກນ້ຳຫນັກເກີນມາດຖານທີ່ທາງການໄດ້ກຳນົດ ແລ່ນໃນລະດູຝົນ.

ມາດຕາ 14: ມອບໃຫ້ກະຊວງສຶກສາທິການປະສານສົມທົບ ກັບກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງຖະແຫລງຂ່າວ ແລະວັດທະນະທຳ ສົມທົບກັນຄົ້ນຄວ້າ ສ້າງແຜນແມ່ບົດ ແລະ ໂຄງການພັດທະນາຊັບພະຍາກອນມະນຸດ; ໃຫ້ກະຊວງສຶກສາທິການ ຄົ້ນຄວ້າສ້າງໂຄງການ ບຳລຸງຄູ ແລະ ພັດທະນາຫລັກສູດການສຶກສາຂັ້ນພື້ນຖານ ໃຫ້ມີຄຸນນະພາບ ແລະ ໄດ້ມາດຖານ, ໂຄງການຂະຫຍາ ແລະ ປັບປຸງຄຸນນະພາບວຽກງານອາຊີວະສຶກສາ, ການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລແຫ່ງຊາດໃຫ້ໄດ້ມາດຖານ, ປັບປຸງນະໂຍບາຍການສຶກສາພາກເອກກະຊົນ ເພື່ອຂະຫຍາຍໂຮງຮຽນຊັ້ນຕ່າງໆ ໃນແຕ່ລະທ້ອງຖິ່ນ, ເປັນຕົ້ນ: ໂຮງຮຽນສາມັນ, ໂຮງຮຽນວິຊາຊີບ, ວິທະຍາໄລ ແລະ ອື່ນໆ; ຄົ້ນຄວ້ານະໂຍບາຍຍົກເວັ້ນພາສີ-ອາກອນທີ່ເຫມາະສົມ ໃນຂົງເຂດນີ້ ເພື່ອຈະໄດ້ຕົກລົງ ແລະ ປະກາດໃຊ້ ແນ່ໃສ່ລະດົມກຳລັງແຮງ ທົ່ວສັງຄົມເຂົ້າໃນການຂະຫຍາຍວຽກງານສຶກສາ.

ມາດຕາ 15: ມອບໃຫ້ກະຊວງສາທາລະນະສຸກ ຄົ້ນຄວ້າສ້າງເປັນໂຄງການ ແລະ ວາງນະໂຍບາຍ ທີ່ຈຳເປັນຕ່າງໆອອກ ເພື່ອແກ້ໄຂບັນດາພະຍາດ ແລະ ໂລກລະບາດ ທີ່ເກີດຂຶ້ນຢູ່ປະເທດເຮົາ, ສືບຕໍ່ຂະຫຍາຍຕາຫນ່າງການບໍລິການ ສຸຂະພາບ, ການປິ່ນປົວປະເພດເສັຽຄ່າ ແລະ ບໍ່ເສັຽຄ່າໃຫ້ສອດຄ່ອງກັບສະພາບຕົວຈິງ.

ມາດຕາ 16: ມອບໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຄົ້ນຄວ້າສ້າງໂຄງການ ເພື່ອປັບປຸງລະບົບສື່ມວນຊົນໃຫ້ມີຄຸນນະພາບ, ຊັດເຈນ, ທັນເວລາ, ເປັນສື່ໃນການໃຫ້ຄວາມຮູ້ ຄວາມເຂົ້າໃຈ ທັງມີລັກສະນະສຶກສາອົບຮົມ ໄປຕາມແນວທາງ ນະໂຍບາຍຂອງພັກ, ໃຫ້ຄວາມຮູ້ດ້ານລະບຽບກົດຫມາຍ, ວິທະຍາສາດ ແລະ ວິຊາການຕ່າງໆ; ເອົາໃຈໃສ່ໂຄສະນາຕົວແບບ, ວຽກດີຄົນເດັ່ນ; ສົ່ງເສີມວັດທະນະທຳທີ່ມີມູນເຊື້ອອັນດີງາມ ໃຫ້ຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ, ຮັບໃຊ້ການທ່ອງທ່ຽວໃຫ້ຫຼາຍຂຶ້ນ; ຈັດສຳມະນາເພື່ອເຜີຍແຜ່ຄວາມຮູ້ ທີ່ສົ່ງເສີມມູນເຊື້ອ ແລະ ວັດທະນະທຳຂອງຊາດ.

ມາດຕາ 17: ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຮ່າງກົດໝາຍ ວ່າດ້ວຍການປະກັນສັງຄົມທີ່ກວມເອົາທຸກພາກສ່ວນເສດຖະກິດ; ຄົ້ນຄວ້ານະໂຍບາຍເງິນເດືອນສຳລັບຂົງເຂດວິສາຫະກິດ ນັບທັງວິສາຫະກິດການລົງທຶນຂອງຕ່າງປະເທດ; ຄົ້ນຄວ້າສ້າງແຜນການ ແລະ ໂຄງການພັດທະນາສີມືແຮງງານ ໃຫ້ມີຄຸນນະພາບ ຮັບປະກັນຖັນແຖວພະນັກງານ, ກຳມະກອນເຕັກນິກທີ່ພົວພັນກັບການລົງທຶນຕ່າງປະເທດ ໃຫ້ມີພຽງພໍທາງດ້ານຈຳນວນ ແລະ ຄຸນນະພາບ; ຄົ້ນຄວ້າ ແລະ ປະກາດໃຊ້ລະບຽບການໃນການຄຸ້ມຄອງແຮງງານຕ່າງດ້າວ ທີ່ເຮັດວຽກໃນ ສປປ ລາວ ໃຫ້ຮັດກຸມ ແລະ ເຂັ້ມງວດ; ແກ້ໄຂບັນຫາຄົນລາວ ທີ່ອອກໄປເຮັດວຽກຢູ່ຕ່າງປະເທດໃຫ້ຖືກຕ້ອງ; ເອົາໃຈໃສ່ ເພື່ອຄົ້ນຄວ້າປະຕິບັດ ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານຕໍ່ການປະຕິວັດ, ຜູ້ອອກກິນເບັ້ຽບຳນານໃຫ້ດີ ແລະ ຖືກຕ້ອງທ່ຽງທຳ.

ມາດຕາ 18: ມອບໃຫ້ກະຊວງຍຸຕິທຳ ສົມທົບກັບສານປະຊາຊົນ ແລະ ອົງການໄອຍະການ ເພື່ອກຳນົດມາດຕະການອັນຈຳເປັນຕ່າງໆ ແນໃສ່ຮັບປະກັນຄວາມຍຸຕິທຳໃນສັງຄົມ, ການປະຕິບັດກົດໝາຍ ແລະ ລະບຽບການຕ່າງໆຢ່າງເຂັ້ມງວດ ເປັນຕົ້ນແມ່ນການປະຕິບັດຄຳຕັດສິນຂອງສານ; ຄົ້ນຄວ້າໂຄງການສ້າງນິຕິກຳໃໝ່ທີ່ຈຳເປັນ ໃຫ້ນັບມື້ນັບເປັນລະບົບຄົບຖ້ວນເທື່ອລະກ້າວ; ຈັດຕັ້ງການສຳມະນາ ແລະ ການໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການຕ່າງໆຢ່າງກວ້າງຂວາງ ເພື່ອເຮັດໃຫ້ທົ່ວສັງຄົມມີຄວາມຮັບຮູ້ ເຊື່ອມຊຶມຢ່າງຖືກຕ້ອງ ແລະ ໜັກແໜ້ນ.

ມາດຕາ 19: ໃຫ້ຂະແໜງການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແລະ ອຳນາດການປົກຄອງທຸກຂັ້ນ ເອົາໃຈໃສ່ເຮັດໃຫ້ທົ່ວປະເທດ ມີຄວາມສະຫງົບຢ່າງໜັກແໜ້ນ; ໃນສະເພາະໜ້ານີ້ ແມ່ນຮັບປະກັນ ບໍ່ໃຫ້ມີ ເຫດການຮ້າຍເກີດຂຶ້ນ, ໂດຍສະເພາະ ຕໍ່ກັບການສະເຫລີມສະຫລອງວັນສະຖາປານາ ສປປ ລາວ ຄົບຮອບ 30 ປີ, ກອງປະຊຸມໃຫຍ່ຄັ້ງທີ 8 ຂອງພັກ ແລະ ການກະກຽມເລືອກຕັ້ງສະພາແຫ່ງຊາດຊຸດທີ 6; ຕັ້ງໜ້າປະກອບສ່ວນ ໃນການສ້າງສາພັດທະນາປະເທດຊາດ; ປຸກລະດົມ ຂົນຂວາຍ ແລະ ຈັດຕັ້ງມະຫາຊົນ ໃຫ້ເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ຮາກຖານຢ່າງກວ້າງຂວາງ.

- ມອບໃຫ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ສົມທົບກັບກະຊວງການຕ່າງປະເທດ ຄົ້ນຄວ້າລະບຽບການ ແລະ ມາດຕະການທີ່ເໝາະສົມ ເພື່ອອຳນວຍຄວາມສະດວກ, ຄຸ້ມຄອງ ແລະ ຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ, ນັກທຸລະກິດ, ນັກລົງທຶນ, ນັບທັງຜູ້ຊ່ຽວຊານຕ່າງປະເທດ ແນໃສ່ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ການຈັດກອງປະຊຸມລະດັບສາກົນ, ການທ່ອງທ່ຽວ, ການເຄື່ອນໄຫວດຳເນີນທຸລະກິດ ແລະ ການລົງທຶນຢູ່ ສປປ. ລາວ ຕາມນະໂຍບາຍຂອງລັດຖະບານ.

ມາດຕາ 20: ມອບໃຫ້ອົງການກວດກາແຫ່ງລັດ, ອົງການກວດສອບບັນຊີ ຮີບຮ້ອນຄົ້ນຄວ້າກົນໄກ ແລະ ລະບຽບການ ຕິດຕາມກວດກາການປະຕິບັດລາຍຈ່າຍງົບປະມານ ຂອງບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນຢ່າງ ເຄັ່ງຄັດກວ່າເກົ່າ ເພື່ອຮັບປະກັນໃຫ້ການປະຕິບັດລາຍຈ່າຍ ໄປຕາມເປົ້າໝາຍຂອງແຜນການທີ່ໄດ້ອະນຸມັດ; ກວດກາຄວາມຖືກຕ້ອງສອດຄ່ອງ ໃນການຈັດຕັ້ງ ແລະ ການນຳໃຊ້ທຶນຂອງບັນດາກອງທຶນຕ່າງໆ ທີ່ຂະແໜງການສູນກາງ ແລະ ທ້ອງຖິ່ນສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ລາຍຮັບ-ລາຍຈ່າຍລວມສູນ ຜ່ານບັນຊີງົບປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້ ແລະ ເພື່ອເສີມຂະຫຍາຍຄຸນປະໂຫຍດ ຂອງແຫຼ່ງທຶນຕ່າງໆໄດ້ເປັນຢ່າງດີ; ລົງກວດກາຢ່າງໃກ້ຊິດ ການຈັດຕັ້ງປະຕິບັດຮ່ວງລາຍຮັບ ແລະ ລາຍຈ່າຍຕ່າງໆ ຂອງງົບປະມານແຫ່ງລັດຢູ່ ແຕ່ລະຂະແໜງການ ແລະ ແຕ່ລະແຂວງ, ລົງຫາຂັ້ນເມືອງ ແລະ ບ້ານ, ໂດຍສະເພາະບ່ອນທີ່ມີ ທຶນງົບປະມານສົມທົບ.

ມາດຕາ 21: ມອບໃຫ້ຄະນະປັບປຸງທຸລະກິດ ສົມທົບກະຊວງການເງິນ ແລະ ທະນາຄານ ແຫ່ງ ສປປ ລາວ ສືບຕໍ່ປັບປຸງ ການບໍລິຫານການແກ້ໄຂໜີ້ສິນ ຂອງລັດວິສາຫະກິດ ໃຫ້ສຳເລັດເປັນກ້າວໆ ເພື່ອໃຫ້ເຄື່ອນໄຫວມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ; ເອົາໃຈໃສ່ປັບປຸງລະບົບບັນຊີຂອງລັດວິສາຫະກິດ ໃຫ້ຖືກຕ້ອງ ແລະ ຮັບປະກັນຄວາມໂປ່ງໃສ; ສືບຕໍ່ປະຕິບັດແຜນປັບປຸງວິສາຫະກິດ ຢ່າງຕັ້ງໜ້າ ແລະ ມີຜົນສັກສິດ ໃນການຈັດຕັ້ງປະຕິບັດແຜນດຳເນີນງານຂອງຕົນ; ເພີ່ມທະວີການປະສານງານລະຫວ່າງພາກສ່ວນຕ່າງໆ ທີ່ກ່ຽວ

ຂ້ອງໃນການຄຸ້ມຄອງງົບປະມານ, ຈັດຕັ້ງການກວດສອບ, ກວດກາບັນດາວິສາຫະກິດ ແລະອົງການທີ່ນຳໃຊ້ງົບປະມານຂອງລັດ.

- ກວດກາຄືນ ຖານະການເງິນ, ການຖືຫຸ້ນ ແລະ ເງິນປັນຜົນຂອງລັດວິສາຫະກິດ ທີ່ເປັນຕົວແທນ ຫລື ຜູ້ຖືຫຸ້ນຂອງລັດຖະບານ ທີ່ຮ່ວມທຸລະກິດກັບເອກະຊົນພາຍໃນ ແລະ ຕ່າງປະເທດ, ໂດຍແຍກໃຫ້ເຫັນລະອຽດ ອັນໃດແມ່ນ ເງິນປັນຜົນ, ອັນໃດແມ່ນອາກອນ ແລະ ພາສີປະເພດຕ່າງໆ ຂອງບໍລິສັດຮ່ວມຫຸ້ນ ທີ່ຈະຕ້ອງສົ່ງຄືນລັດຖະບານ ແລະ ອັນໃດແມ່ນລາຍຮັບຂອງລັດວິຫາຫະກິດເອງ, ຕົວຢ່າງ: ບໍລິສັດໄຟຟ້າເທີນ-ຫີນບູນ ທີ່ມີບໍລິສັດໄຟຟ້າລາວ ເປັນຜູ້ຖືຫຸ້ນຂອງລັດຖະບານ, ບໍລິສັດເບຍລາວຈຳກັດ,...ໃຫ້ໄດ້ຢ່າງໜ້ອຍ 10 ບໍລິສັດ. ຫລັງຈາກນັ້ນ, ໃຫ້ລາຍງານລັດຖະບານ ເພື່ອຄົ້ນຄວ້າຊອກຊ່ອງທາງປັບປຸງວິສາຫະກິດເລົ່ານັ້ນ ແນໃສ່ຫລຸດຜ່ອນການໃຊ້ຈ່າຍຊ້ຳຊ້ອນ, ການຟູມເຟືອຍ ແລະ ເພື່ອຮັບປະກັນການເກັບລາຍຮັບເຂົ້າງົບປະມານໄດ້ຢ່າງ ເຕັມສ່ວນ.

ມາດຕາ 22: ມອບໃຫ້ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສ້າງໂຄງການຄົ້ນຄວ້າວິທະຍາສາດການນຳໃຊ້ ສຳລັບຂະແໜງ ທີ່ເຫັນວ່າເໝາະສົມກັບ ສປປ.ລາວ, ໃນນີ້ ນັບທັງໂຄງການຮ່ວມມືຄົ້ນຄວ້າກັບສາກົນ, ໂຄງການກໍ່ສ້າງນັກຄົ້ນຄວ້າ ໃນດ້ານຕ່າງໆ ທັງຢູ່ພາຍໃນ ແລະ ນອກປະເທດ; ສ້າງແຜນລະດົມແຫຼ່ງທຶນ ເຂົ້າໃນການຄົ້ນຄວ້າ ວິທະຍາສາດ-ເຕັກນິກ ຈາກພາຍໃນ ສົມທົບກັບການຍາດແຍ່ງການຊ່ວຍເຫຼືອຈາກຕ່າງປະເທດ; ສ້າງແຜນນຳໃຊ້ຜົນສຳເລັດ ດ້ານວິທະຍາສາດຂອງໂລກ ເຂົ້າໃນການພັດທະນາ; ຄົ້ນຄວ້າ ແລະ ເກັບກຳພູມປັນຍາ ຂອງປະຊາຊົນໃນການຜະລິດ, ການບໍລິການ ແລະ ການດຳລົງຊີວິດທີ່ດີ ເພື່ອສົ່ງເສີມ ແລະ ເຜີຍແຜ່ ຈາກທ້ອງຖິ່ນນີ້ ໄປສູ່ທ້ອງຖິ່ນອື່ນໆ.

ມາດຕາ 23: ມອບໃຫ້ອົງການທ່ອງທ່ຽວແຫ່ງຊາດ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງໂຄງການປັບປຸງການບໍລິການທ່ອງທ່ຽວ ໃຫ້ໄດ້ມາດຕະຖານເພື່ອດຶງດູດນັກທ່ອງທ່ຽວເພີ່ມຂຶ້ນ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ແລະ ເຮັດຂາອອກກັບທີ່ ຢູ່ໃນແຕ່ລະທ້ອງຖິ່ນ; ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າກະກຽມເງື່ອນໄຂຕ່າງໆ ເພື່ອເປີດດ່ານສາກົນທີ່ເໝາະສົມ, ປະຕິບັດການອອກວີຊາກັບດ່ານໃຫ້ກວ້າງກວ່າເກົ່າ; ເອົາໃຈໃສ່ສ້າງແຜນພັດທະນາພື້ນຖານຮອງຮັບດ້ານການທ່ອງທ່ຽວ.

ມາດຕາ 24: ມອບໃຫ້ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ຄົ້ນຄວ້າປັບປຸງນະໂຍບາຍ ແລະ ມາດຕະການຕ່າງໆ ໃນການຜັນຂະຫຍາຍກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ, ການແບ່ງ ແລະ ມອບສິດ, ໜ້າທີ່, ຄວາມຮັບຜິດຊອບ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ສອດຄ່ອງ, ລະອຽດ ແລະ ຈະແຈ້ງ ໃນການຄຸ້ມຄອງເສດຖະກິດ-ສັງຄົມ; ສົມທົບກັບກະຊວງການເງິນ ແລະ ຫ້ອງການປັບປຸງທຸລະກິດ ຂອງສຳນັກງານນາຍົກລັດຖະມົນຕີ ຄົ້ນຄວ້ານະໂຍບາຍເງິນເດືອນຂອງພະນັກງານ ແລະ ກຳມະກອນ ຢູ່ຂົງເຂດລັດວິສາຫະກິດ ເພື່ອເຮັດໃຫ້ພະນັກງານ, ກຳມະກອນດັ່ງກ່າວ ມີລະດັບເງິນເດືອນທີ່ສົມເຫດສົມຜົນ.

ມາດຕາ 25: ມອບໃຫ້ບັນດາກະຊວງ, ແຂວງ ແລະ ເມືອງ ອີງໃສ່ພາລະບົດບາດຂອງຕົນ ຄົ້ນຄວ້າສ້າງລະບຽບການ, ມາດຕະການລະອຽດທີ່ສອດຄ່ອງ ເພື່ອປະຕິບັດນະໂຍບາຍ ແລະ ກົດໝາຍທີ່ມີແລ້ວ ແລະ ນະໂຍບາຍເພີ່ມເຕີມ ທີ່ ກຳນົດອອກໃນແຜນການປີ 2005-2006 ເພື່ອສ້າງເງື່ອນໄຂລະດົມ ແລະ ສົ່ງເສີມທຸກພາກ

ສ່ວນເສດຖະກິດ ໃຫ້ເຂົ້າຮ່ວມໃນການລົງທຶນຜະລິດສິນຄ້າ ແລະ ບໍລິການ ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນ ທີ່ມີເງື່ອນໄຂອຳນວຍຄວາມສະດວກ.

**ມາດຕາ 26:** ໃຫ້ສະຖາບັນຄົ້ນຄວ້າເສດຖະກິດຂອງ ຄຜທ ແລະ ສະຖາບັນອື່ນໆ ດຳເນີນການຄົ້ນຄວ້າເພື່ອຮັບໃຊ້ໃຫ້ແກ່ ການຄຸ້ມຄອງເສດຖະກິດ-ສັງຄົມ ໂດຍມີການຈັດສຳມະນາ, ເຜີຍແຜ່ ແລກປ່ຽນບົດຮຽນ ລະຫວ່າງວິຊາການຂອງ ບັນດາຂະແໜງການຕ່າງໆ ເພື່ອໃຫ້ມີຂໍ້ມູນຂ່າວສານຮັບໃຊ້ໃຫ້ແກ່ການນຳ; ພ້ອມທັງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍປຸກລະດົມ ແລະ ນຳໃຊ້ປັນຍາຄວາມຮູ້, ບົດຮຽນທີ່ອຸດົມຮັ່ງມີຂອງຄົນລາວ ຈາກທຸກພາກສ່ວນ (ນັບທັງຢູ່ພາຍໃນ ແລະ ຄົນລາວທີ່ຮັກຊາດ ຢູ່ຕ່າງປະເທດ) ເພື່ອປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຄົ້ນຄວ້າ, ສິດສອນ, ໃຫ້ຄຳປຶກສາ, ຝຶກອົບຮົມ ໃນສະຖາບັນສຶກສາ, ເວທີສຳມະນາ ແລະ ຮູບການອື່ນ ເພື່ອສ້າງກຳລັງແຮງສັງລວມ ໃນການພັດທະນາປະເທດຊາດ.

**ມາດຕາ 27:** ຫ້າມເດັດຂາດ ບໍ່ໃຫ້ຂະແໜງການໃດ, ທ້ອງຖິ່ນໃດຫຼຸດຜ່ອນ ຫຼື ຍົກເວັ້ນພາສີອາກອນ ແລະ ຄ່າທໍານຽມທຸກປະເພດຕາມລຳພັງ. ທຸກການຍົກເວັ້ນ ຫຼື ຫຼຸດຜ່ອນພາສີອາກອນ ແລະ ພັນທະອື່ນໆ ຕໍ່ງົບປະມານແຫ່ງລັດ ແມ່ນລັດຖະບານເປັນຜູ້ຕົກລົງ ໂດຍຜ່ານການຄົ້ນຄວ້າ ຂອງກະຊວງການເງິນ. ຖ້າຂະແໜງການໃດ ຫຼື ທ້ອງຖິ່ນໃດ ຫາກຝ່າຝືນ ແມ່ນຈະຖືກພິຈາລະນາດ້ານວິໄນຢ່າງເຂັ້ມງວດ; ຫ້າມບໍ່ໃຫ້ບຸກຄົນ ແລະ ການຈັດຕັ້ງເກັບ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ບໍ່ນອນຢູ່ໃນລະບຽບກົດໝາຍ.

**ມາດຕາ 28:** ຫ້າມເດັດຂາດບໍ່ໃຫ້ຂະແໜງການໃດ, ທ້ອງຖິ່ນໃດ ປະຕິບັດໂຄງການທີ່ບໍ່ນອນໃນແຜນການ ທີ່ສະພາແຫ່ງຊາດອະນຸມັດ, ເປັນຕົ້ນ ແມ່ນໃຫ້ຢຸດຕິ ການໃຫ້ຫົວໜ່ວຍທຸລະກິດ ປະຕິບັດໂຄງການກ່ອນ ແລ້ວຈຶ່ງຂຶ້ນແຜນງົບປະມານຊຳລະຕາມພາຍຫລັງ. ທຸກອົງການຈັດຕັ້ງ ທີ່ໄດ້ຮັບການເບີກຈ່າຍ ຈາກງົບປະມານຂອງລັດ ຕ້ອງປະຕິບັດຕາມຮ່ວງລາຍຈ່າຍ ຂອງແຜນງົບປະມານ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວຢ່າງເຂັ້ມງວດ.

**ມາດຕາ 29:** ມອບໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງ ຂະແໜງການອື່ນໆ ສ້າງບົດແນະນຳວິທີຈັດຕັ້ງປະຕິບັດ ແລະ ແຜນດຳເນີນງານລະອຽດ ດ້ານວິຊາສະເພາະ ທີ່ກ່ຽວຂ້ອງຂອງຕົນ ເພື່ອຜັນຂະຫຍາຍດຳລັດສະບັບນີ້; ຈັດຕັ້ງເຜີຍແຜ່ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈຳສົກປີ 2005-2006 ຢ່າງເລິກເຊິ່ງ ແລະ ເປັນຂະບວນ ແຕ່ສູນກາງລົງຮອດທ້ອງຖິ່ນ ໄປພ້ອມກັບການໂຄສະນາເຜີຍແຜ່ ຜ່ານລະບົບສື່ມວນຊົນຕ່າງໆ.

**ມາດຕາ 30 :** ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ, ນະຄອນຫລວງວຽງຈັນ, ບັນດາແຂວງ ແລະ ເຂດພິເສດ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານປະຈຳສົກປີ 2005-2006 ລວມທັງບັນດາໂຄງການລົງທຶນທີ່ໄດ້ກຳນົດໄວ້ ໃຫ້ໄດ້ຮັບຜົນດີ ພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດຂອງຕົນ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຊາບ ຢ່າງເປັນລະບົບ ແລະ ປົກກະຕິ.

ມາດຕາ 31: ມອບໃຫ້ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນຫລວງວຽງຈັນ, ເຈົ້າແຂວງ ແລະ ຫົວໜ້າເຂດພິເສດ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານ ໃນແຕ່ລະໄລຍະຢ່າງເປັນປົກກະຕິ.

ມາດຕາ 32 : ດຳລັດສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ວັນທີ 01 ຕຸລາ 2005 ເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ